ອົງການໄອຍະການ ປະຊາຊົນສູງສຸດ
ເລກທີ 987 ອອປສ
ວັນທີ 1.12.12

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ

ຫ້ອງການ

ເລກທີ 19 /ພນ.ຫກ

ນະຄອນຫລວງວຽງຈັນ, ວັນທີ 24 ມັງກອນ 2012

# ແຈ້ງການ

ເຖິງ: ບັນດາກະຊວງ-ອົງການທຽບເທົ່າຂັ້ນສູນກາງ,ແຂວງ ແລະ ນະຄອນຫຼວງ.

ເລື່ອງ: ການແຕ່ງຕັ້ງຜູ້ບໍລິຫານຂັ້ນກະຊວງ, ກົມ, ຫ້ອງການ, ສະຖາບັນ ແລະ ສູນ ຂອງກະຊວງພາຍໃນ.

- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 67/ນຍ, ລົງວັນທີ 22 ກໍລະກົດ 2011 ວ່າດ້ວຍການສັບຊ້ອນກົງຈັກການຈັດຕັ້ງຂອງ ບັນດາກະຊວງ-ອົງການຢູ່ຂັ້ນສູນກາງ;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 253 /ນຍ, ລົງວັນທີ 19 ສິງຫາ 2011 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງພາຍໃນ;

ຫ້ອງການກະຊວງພາຍໃນ ຂໍຖືເປັນກຽດແຈ້ງການມາຍັງ ບັນດາກະຊວງ-ອົງການທຽບເທົ່າຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນຊາບວ່າ: ກະຊວງພາຍໃນເປັນກະຊວງທີ່ສ້າງຕັ້ງຂຶ້ນໃໝ່ຊຶ່ງມີ ພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານໃນການຄຸ້ມຄອງມະຫາພາກກ່ຽວກັບ ການພັດທະນາການປົກຄອງຂັ້ນສູນກາງ ແລະ ທ້ອງຖິ່ນ; ຄຸ້ມຄອງລັດຖະກອນ; ລະບຽບການສ້າງຕັ້ງ ແລະ ຄຸ້ມຄອງອົງການຈັດຕັ້ງທາງສັງຄົມ; ວຽກງານແຜນທີ່; ວຽກງານສຳເນົາເອກະສານແຫ່ງຊາດ; ວຽກງານຊົນເຜົ່າແລະສາສະໜາ; ວຽກງານຄຸ້ມຄອງພົນລະເມືອງ ແລະ ວຽກງານແຂ່ງຂັນ-ຍ້ອງຍໍໃນຂອບເຂດທົ່ວປະເທດ. ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ວຽກງານ ຕາມພາລະບົດບາດດັ່ງກ່າວນັ້ນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ກະຊວງພາຍໃນຈຶ່ງໄດ້ມີການແຕ່ງຕັ້ງ, ຊັບຊ້ອນ ຈັດວາງບຸກຄະລາກອນພາຍໃນກະຊວງຄືນໃໝ່ ເພື່ອໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານ ໂດຍສະເພາະຕຳແໜ່ງຜູ້ບໍລິຫານຂັ້ນກະຊວງ, ກົມ, ຫ້ອງການ, ສະຖາບັນ ແລະ ສູນ ທີ່ສັງກັດກະຊວງພາຍໃນ ດັ່ງລາຍລະອຽດລຸ່ມນີ້:

1. <u>ຜູ້ບໍລິຫານຂັ້ນກະຊວງ</u>

1) ທ່ານ ຄໍາປານ ພິລາວົງ ຂັ້ນສູງ ວິຊາ ວຽກງານ ປກສ ເປັນລັດຖະມົນຕີວ່າການ;
2) ທ່ານ ຄໍາມູນ ວິພົງໄຊ ປະລິນຍາໂທ ວິຊາ ການປົກຄອງ ເປັນລັດຖະມົນຕີຊ່ວຍວ່າການ;
3) ທ່ານ ດຣ. ທອງຈັນ ມະນີໄຊ ປະລິນຍາເອກ ວິຊາແຜນທີ່ ເປັນລັດຖະມົນຕີຊ່ວຍວ່າການ;
4) ທ່ານ ສີພຸກ ວົງພັກດີ ປະລິນຍາໂທ ວິຊາ ການປົກຄອງ ເປັນຜູ້ຊ່ວຍລັດຖະມົນຕີ;

2. <u>ຜູ້ບໍລິຫານຂັ້ນກົມ</u>

- <u>ຫ້ອງການ</u>

1. ທ່ານ ນ. ຄໍາພູນ ແກ້ວສະຫວັນ ປະລິນຍາໂທ ວິຊາ ການປົກຄອງ ເປັນຫົວໜ້າ;
2. ທ່ານ ນ. ວິໄລທອນ ສູນທອນໄຊມົງຄຸນ ປະລິນຍາໂທ ວິຊາ ການວາງແຜນພັດທະນາ ຊົນນະບົດແລະພູມີພາກ ເປັນຮອງ;
3. ທ່ານ ພິມມາ ແກ້ວບົວພາ ປະລິນຍາຕີ ວິຊາການປົກຄອງ ເປັນຮອງ;

- <u>ກົມຈັດຕັ້ງ ແລະ ພະນັກງານ</u>

1. ທ່ານ ສົມດີ ສີລິລັດ ປະລິນຍາຕີ ວິຊາ ວັນນະຄະດີ-ພາສາສາດ ເປັນຫົວໜ້າກົມ;
2. ທ່ານ ຄໍາພັນ ສັກລາສິງ ປະລິນຍາໂທ ວິຊາ ກໍ່ສ້າງພັກ ເປັນຮອງ;

- <u>ກົມກວດກາ</u>

1. ທ່ານ ດວງມະນີ ສຸວັນໂນ ປະລິນຍາໂທ ວິຊາ ກົນຈັກກະສິກໍາ ເປັນຫົວໜ້າກົມ;

- <u>ກົມແຜນການ ແລະ ການຮ່ວມມື</u>

1. ທ່ານ ນິສິດ ແກ້ວປັນຍາ ປະລິນຍາໂທ ວິຊາ ການປົກຄອງ ເປັນຫົວໜ້າກົມ;
2. ທ່ານ ນ. ຈັນທາ ອ່ອນໄຊວຽງ ປະລິນຍາໂທ ວິຊາ ການປົກຄອງ ເປັນຮອງ;

- <u>ກົມພັດທະນາການບໍລິຫານລັດ</u>

1. ທ່ານ ອໍາພາ ສົມມະສອນ ປະລິນຍາຕີ ວິຊາ ຄຸ້ມຄອງເສດຖະກິດ ເປັນຫົວໜ້າກົມ;
2. ທ່ານ ທອງສະຫວັນ ປັນຍາວິຈິດ ປະລິນຍາໂທ ວິຊາ ການບໍລິຫານລັດ ເປັນຮອງ;

- <u>ກົມການປົກຄອງທ້ອງຖິ່ນ</u>

1. ທ່ານ ເຊືອດ ສຸລິຍະເດດ ເໜືອປະລິນຍາຕີ ວິຊາ ການຄຸ້ມຄອງຊັບພະຍາກອນມະນຸດ ເປັນຫົວໜ້າກົມ;
2. ທ່ານ ບຸນພັກ ສົມບັນດິດ ປະລິນຍາໂທ ວິຊາ ການປົກຄອງ ເປັນຮອງ;
3. ທ່ານ ບຸນຈັນ ນິຍະວົງ ປະລິນຍາໂທ ວິຊາ ເສດຖະກິດແຮງງານ ເປັນຮອງ;

- <u>ກົມຄຸ້ມຄອງລັດຖະກອນ</u>

1. ທ່ານ ວິໄຊ ພັນດານຸວົງ ປະລິນຍາໂທ ວິຊາ ການປົກຄອງ ເປັນຫົວໜ້າ;
2. ທ່ານ ທອງວັນ ສີສະຫວັນ ປະລິນຍາໂທ ວິຊາ ຄຸ້ມຄອງບໍລິຫານບຸກຄະລາກອນ ເປັນຮອງ;

- <u>ກົມແຜນທີ່ແຫ່ງຊາດ</u>

1. ທ່ານ ບົວສີດ ສຸວັນນະກຸມມານ ປະລິນຍາໂທ ວິຊາ ຮູບຖ່າຍອາກາດ ແລະ ດາວທຽມ ເປັນຫົວໜ້າກົມ;
2. ທ່ານ ພົມມະລີ ພັນທະວົງ ຊັ້ນສູງ ວິຊາ ຄູພູມສາດ-ປະຫວັດສາດ ເປັນຮອງ;
3. ທ່ານ ນ. ສີໃຄ ສໍສີລິບຸນມາ ປະລິນຍາໂທ ວິຊາ ພາບຖ່າຍທາງອາກາດ ເປັນຮອງ;
4. ທ່ານ ທອງມາ ວົງປະສິດ ປະລິນຍາໂທ ວິຊາ ແຜນທີ່ ເປັນຮອງ;

- <u>ກົມສຳເນົາເອກະສານແຫ່ງຊາດ</u>

1. ທ່ານ ທອງສີ ຫວ່າງ ປະລິນຍາໂທ ວິຊາ ຫໍສະໝຸດ-ສຳເນົາ ເປັນຫົວໜ້າກົມ;
2. ທ່ານ ນ. ທອງຈັນ ແກ້ວແສນທອນ ປະລິນຍາໂທ ວິຊາ ອັກສອນສາດ ເປັນຮອງ;
3. ທ່ານ ນ. ເພັດມະນີ ຫຼວງລາດ ປະລິນຍາໂທ ວິຊາ ເອກະສານວິທະຍາ ເປັນຮອງ;
4. ທ່ານ ນ. ສຸພິນ ລິດທິສັກ ປະລິນຍາໂທ ວິຊາ ຫໍສະໝຸດ ເປັນຮອງ;

- <u>ກົມແຂ່ງຂັນ ແລະ ຍ້ອງຍໍ</u>

1. ທ່ານ ເທດລະຄອນ ດວງສິນທິ ຊັ້ນສູງ ວິຊາທິດສະດີມາກ-ເລນິນ ເປັນຫົວໜ້າກົມ;
2. ທ່ານ ເຢຍລໍ່ ເຈ່ຍວ່າ ຊັ້ນສູງ ວິຊາ ລັດ ແລະ ກົດໝາຍ ເປັນຮອງ;

- <u>ກົມປະເມີນຜົນ ແລະ ພັດທະນາລັດຖະກອນ</u>

1. ທ່ານ ນ. ອະທິພອນ ບຸນນະຜົນ ປະລິນຍາໂທ ວິຊາ ການປົກຄອງ ເປັນຫົວໜ້າ;
2. ທ່ານ ວັນນະ ບຸບຜາ ປະລິນຍາໂທ ວິຊາ ການບໍລິຫານພາກລັດແລະເອກະຊົນ ເປັນຮອງ;

- <u>ກົມຄຸ້ມຄອງພົນລະເມືອງ</u>

ຍັງບໍ່ທັນມີບຸກຄະລາກອນ

- <u>ກົມວຽກງານຊົນເຜົ່າ ແລະ ສາສະໜາ</u>

1. ທ່ານ ສໍສອນຜົດ ພານຸວົງ ປະລິນຍາໂທ ວິຊາ ຊົນເຜົ່າວິທະຍາ ເປັນຫົວໜ້າກົມ;
2. ທ່ານ ຄຳພັນ ປັນຍາສັກ ປະລິນຍາຕີ ວິຊາ ຈິດຕະສຶກສາ ເປັນຮອງ;

- **ສະຖາບັນຄົ້ນຄວ້າວິທະຍາສາດການປົກຄອງ ແລະ ຝຶກອົບຮົມ**

1. ທ່ານ ສິງທະວອນ ດາລາວົງ — ປະລິນຍາໂທ ວິຊາ ພາສາລັດເຊຍ-ອັງກິດ ເປັນຫົວໜ້າສະຖາບັນ;

- **ສູນສຳຫຼວດວັດແທກ ແລະ ແຜນທີ່**

1. ທ່ານ ດຣ. ກອງຄຳ ສຸລິຍາ — ປະລິນຍາເອກ ວິຊາ ສຳຫຼວດວັດແທກ ເປັນຫົວໜ້າສູນ;
2. ທ່ານ ບົວວັນ ພຸດທະສອນ — ປະລິນຍາໂທ ວິຊາ ແຜນທີ່ຮູບຖ່າຍ ເປັນຮອງ;

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບແລະເພື່ອຮັບປະກັນໃຫ້ແກ່ການປະສານສົມທົບວຽກງານໃຫ້ຄ່ອງຕົວ ແລະ ຖືກເປົ້າໝາຍ.

**ຫົວໜ້າຫ້ອງການ**

**ຄຳພຸບ ແກ້ວສະຫວັນ**

<u>ບ່ອນນຳສົ່ງ</u> :

- ບັນດາກະຊວງ-ອົງການທຽບເທົ່າຂັ້ນສູນກາງ — ພາກສ່ວນລະ 01 ສະບັບ;
- ບັນດາແຂວງ, ນະຄອນຫຼວງ — ພາກສ່ວນລະ 01 ສະບັບ;
- ບັນດາກົມສັງກັດກະຊວງພາຍໃນ — ພາກສ່ວນລະ 01 ສະບັບ;
- ພະແນກພາຍໃນແຂວງ,ນະຄອນຫຼວງ — ພາກສ່ວນລະ 01 ສະບັບ;
- ສຳເນົາກະຊວງພາຍໃນ — 01 ສະບັບ.